# ຂໍ້ກຳນົດດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະ ສິ່ງແວດລ້ອມ

ຂໍ້ກຳນົດໃນການເຮັດວຽກ ພາຍໃຕ້ ບໍລິສັດ ໄຟຟ້າຫົງສາ ຈຳກັດ ເພື່ອໃຫ້ປະຕິບັດຕາມຢ່າງເຄັ່ງຄັດ ແລະ ສອດຄ່ອງຕາມຂໍ້ກຳນົດທີ່ກ່ຽວຂ້ອງ ດັ່ງນີ້:

<u>ຜູ້ຮັບເໝົາຂະໜາດນ້ອຍ</u>

ເພື່ອສະໜັບສະໜູນການເຮັດວຽກ ແລະປະຕິບັດດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມໃນພື້ນທີ່ເຮັດວຽກ ເພື່ອປ້ອງກັນ ແລະຫຼຸດຜ່ອນຄວາມສ່ຽງທຸກປະເພດ ແລະປະຕິບັດຕາມນະໂຍບາຍດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະ ສິ່ງແວດລ້ອມ ຂອງບໍລິສັດ ໄຟຟ້າຫົງສາ ຈຳກັດ ແລະປະຕິບັດຕາມພັນທະສັນຍາ ລວມເຖິງກົດໝາຍ ແລະກຳນົດດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມດ້ວຍເຫດນີ້ ບໍລິສັດ ໄຟຟ້າຫົງສາ ຈຳກັດ (“ຜູ້ວ່າຈ້າງ)”ໄດ້ຈັດຕັ້ງມາດຕະການດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມຂຶ້ນ ເພື່ອໃຫ້ຜູ້ຮັບເໝົາຈະຕ້ອງປະຕິບັດຢ່າງເຄັ່ງຄັດ.

1. ຄວາມຮັບຜິດຊອບ ແລະພັນທະສັນຍາຂອງຜູ້ຮັບເໝົາ

1.1 ຜູ້ຮັບເໝົາ ລວມເຖິງ ຜູ້ຮັບເໝົາຍ່ອຍ ແລະຜູ້ຜະລິດ ທີ່ປະຕະບັດໃນສ່ວນການກໍ່ສ້າງ ແລະດຳເນີນງານ ໃຫ້ເປັນໄປຕາມຂໍ້ກຳນົດ ດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມຢ່າງເຂັ້ມງວດຕາມທີ່ກຳນົດໄວ້ໃນຂໍ້ຕົກລົງການໃຫ້ສຳປະທານພະລັງງານ (CA), ເອກະສານຊ້ອນທ້າຍ I ແລະ ເອກະສານຊ້ອນທ້າຍ Q ພັນທະສັນຍາດ້ານ ສັງຄົມ ແລະ ສິ່ງແວດລ້ອມ, ກົດໝາຍ ແລະຂໍ້ກຳນົດຂອງ ສປປ ລາວ, ແຜນການຈັດການ ແລະຕິດຕາມກວດກາດ້ານສິ່ງແວດລ້ອມໃນໄລຍະດຳເນີນການ (OPEMMP) ແລະຂັ້ນຕອນການປະຕິບັດດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະ ສິ່ງແວດລ້ອມຫຼືຄຳແນະນຳໃນການເຮັດວຽກ ຫຼືຂໍ້ກຳນົດອື່ນໆ.

1.2 ຜູ້ຮັບເໝົາ ຈະຕ້ອງຮັບຜິດຊອບໃນການປະຕິບັດງານ ເພື່ອປ້ອງກັນການເກີດອຸປະຕິເຫດ ຫຼືເກີດຄວາມເສຍຫາຍ, ຫຼຸດຜ່ອນ ອັນຕະລາຍ ຫຼືຜົນກະທົບດ້ານສິ່ງແວດລ້ອມແລະປ້ອງກັນການບໍ່ປະຕິບັດຕາມຂໍ້ກຳນົດຂອງລັດຖະບານລາວ.

1.3 ທຸກຄ່າໃຊ້ຈ່າຍເພື່ອແກ້ໄຂມົນລະພິດ, ການລົບກວນຊຸມຊົນ, ຂໍ້ກຳນົດGOL ຫຼືການແກ້ໄຂ ແລະປິດຂໍ້ຮຽກຮ້ອງ ຫຼືຂໍ້ຮ້ອງທຸກຈາກຊຸມຊົນທ້ອງຖິ່ນ ຫຼື GOL ຫຼືບຸກຄົນທີ່ກ່ຽວຂ້ອງ ອັນເນື່ອງມາຈາກ ກິດຈະກຳຜູ້ຮັບເໝົາ ແລະຈາກຜູ້ດຳເນີນການ ຈະຕ້ອງເປັນພັນທະສັນຍາຕໍ່ຜູ້ຮັບເໝົາ ແລະ ຜູ້ປະກອບການ. ຜູ້ຮັບເໝົາ/ຜູ້ປະກອບການຈະຕ້ອງຍິນຍອມຈ່າຍຄ່າປັບໃໝຕາມຂໍ້ກຳນົດໃນ **ຕາຕະລາງທີ່1** ຫຼືຫັກຄ່າປັບໃໝຈາກການຈ່າຍເງິນຄັ້ງຕໍ່ໄປແທນ.

**ຕາຕະລາງ 1 ຄ່າປັບໃໝ**

| ການບໍ່ປະຕິບັດຕາມຂໍ້ກຳນົດ | ຈຳນວນເງິນ USD$ ຕໍ່າສຸດ ແລະ ສູງສຸດ | ສາເຫດທີ່ພິຈາລະນາ | ການປັບໃໝເພີ່ມທີ່ DONEI ອາດກຳນົດ |
|---|---|---|---|
| ການຂັດຂວາງ ຫຼືການແຊກແຊງກັບເຈົ້າໜ້າທີ່ໃນລະຫວ່າງປະຕິບັດງານ ໃນສ່ວນທີ່ກ່ຽວ ຂ້ອງກັບເອກະສານຊ້ອນທ້າຍ I ນີ້ | • 500 ຫາ 25,000 | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>• ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ | • ອອກປະກາດກ່ຽວກັບການໃຊ້ກົດໝາຍ |

| ການບໍ່ປະຕິບັດຕາມຂໍ້ກຳນົດ | ຈຳນວນເງິນ USD$ ຕ່ຳສຸດ ແລະ ສູງສຸດ | ສາເຫດທີ່ພິຈາລະນາ | ການປັບໃໝເພີ່ມທີ່ DONEI ອາດກຳນົດ |
|---|---|---|---|
| | | ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | |
| ໃຫ້ຂໍ້ມູນບໍ່ເປັນຄວາມຈິງ ຫຼືເຮັດໃຫ້ເຂົ້າໃຈຜິດຕໍ່ EMU ຫຼື DONEI ຫຼືຕົວແທນ ໃນຫົວຂໍ້ທີ່ລະບຸໃນເອກະສານຊ້ອນທ້າຍ I ນີ້ | • 5,000 ຫາ 25,000 | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>• ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ລະງັບ ຫຼືຖອນໃບອະນຸຍາດທັງໝົດ ຫຼືບາງສ່ວນ<br>• ການລະເມີດສັນຍາ |
| ການປົດບັງຂໍ້ມູນກັບເຈົ້າໜ້າທີ່ ເມື່ອໄດ້ຮັບການຮ້ອງຂໍກ່ຽວກັບການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ I ນີ້ | • 500 ຫາ 25,000 | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>• ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ອອກປະກາດກ່ຽວກັບການໃຊ້ກົດໝາຍ |
| ເຮັດວຽກໂດຍບໍ່ມີໃບອະນຸຍາດ | • 2,500 ຫາ 25,000<br>• ບວກ 250 ຫາ 2,500 ຕໍ່ວັນ ຈົນກວ່າຈະມີການແກ້ໄຂ | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>• ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ການລະເມີດສັນຍາ |
| ການບໍ່ປະຕິບັດຕາມປະກາດກ່ຽວກັບການບັງຄັບໃຊ້ກົດໝາຍ ຫຼືການບອກກ່າວການຢຸດ ການລະເມີດ ຂອງເອກະສານຊ້ອນທ້າຍ I ນີ້ | • 10,000 ຫາ 25,000<br>• ບວກ 250 ຫາ 5,000 ຕໍ່ວັນ ຈົນກວ່າຈະມີການແກ້ໄຂ | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>• ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ລະງັບ ຫຼືຖອນໃບອະນຸຍາດທັງໝົດ ຫຼືບາງສ່ວນ<br>• ການລະເມີດສັນຍາ |
| ບໍ່ແຈ້ງ EMU ຫຼື DONEI(ຫຼືຝ່າຍ GOL | • 5,000 ຫາ 25,000 | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນ | • ອອກປະກາດກ່ຽວກັບການໃຊ້ກົດໝາຍ |

| ການບໍ່ປະຕິບັດຕາມຂໍ້ກຳນົດ | ຈຳນວນເງິນ USD$ ຕ່ຳສຸດ ແລະ ສູງສຸດ | ສາເຫດທີ່ພິຈາລະນາ | ການປັບໃໝເພີ່ມທີ່ DONEI ອາດກຳນົດ |
|---|---|---|---|
| ທີ່ກ່ຽວຂ້ອງອື່ນໆ ຕາມຄວາມເໝາະສົມ) ໃນກໍລະນີທີ່ເກີດເຫດການຄວາມສ່ຽງຕໍ່ສິ່ງແວດລ້ອມ | | ປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ລະງັບ ຫຼືຖອນໃບອະນຸຍາດທັງໝົດ ຫຼືບາງສ່ວນ |
| ບໍ່ປະຕິບັດຕາມຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ເພື່ອບໍ່ໃຫ້ເກີດອັນຕະລາຍຈາກຄວາມເສຍຫາຍຕໍ່ສິ່ງແວດລ້ອມ,ຊີວິດ ຫຼືຊັບສິນ ໂດຍຂຶ້ນກັບ CPEMMP ຫຼື OPEMMP | • 10,000 ຫາ 50,000 | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ອອກປະກາດກ່ຽວກັບການໃຊ້ກົດໝາຍ<br>• ລະງັບ ຫຼືຖອນໃບອະນຸຍາດທັງໝົດ ຫຼືບາງສ່ວນ |
| ບໍ່ປະຕິບັດຕາມ ພາລາມິເຕີທີ່ບັງຄັບໃຊ້(ຕໍ່ການລະເມີດ/ຕໍ່ວຽກງານ) | • 2,500 ຫາ 50,000 | • ໂດຍເຈດຕະນາ<br>• ແຮງຈູງໃຈທາງການເງິນ ຫຼືເພື່ອຜົນປະໂຫຍດທາງການເງິນ<br>• ປະຫວັດບໍ່ສອດຄ່ອງ<br>• ພະຍາຍາມປົກປິດ<br>• ອາດກໍ່ໃຫ້ເກີດຄວາມເສຍຫາຍທີ່ຮ້າຍແຮງຕໍ່ສິ່ງແວດລ້ອມແລະຜູ້ຄົນ | • ອອກປະກາດກ່ຽວກັບການໃຊ້ກົດໝາຍ<br>• ລະງັບ ຫຼືຖອນໃບອະນຸຍາດທັງໝົດ ຫຼືບາງສ່ວນ<br>• ການລະເມີດສັນຍາ |

ໝາຍເຫດ: ສັນຍາສຳປະທານບໍ່ແຮ່, ເອກະສານຊ້ອນທ້າຍ( 30 ພະຈິກ 2009) ແລະສັນຍາສຳປະທານເໝືອງຫີນປູນ, ເອກະສານຊ້ອນທ້າຍ(30 ພະຈິກ 2009)

ເມື່ອມີຄວາມບໍ່ສອດຄ່ອງທີ່ກ່ຽວຂ້ອງກັບການປະຕິບັດດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມຈາກການກວດກາໂດຍ HPC ຫຼືກວດກາໂດຍ GOL ຜູ້ວ່າຈ້າງຈະແຈ້ງໃຫ້ຜູ້ຮັບເໝົາ/ຜູ້ປະກອບການ ເພື່ອດຳເນີນການແກ້ໄຂ ຫາກບໍ່ມີການແກ້ໄຂ ຫຼືລະເວັ້ນການແກ້ໄຂຫຼັງຈາກວັນທີ່ກຳນົດ ເກີນ 7 ວັນ ຜູ້ວ່າຈ້າງມີສິດປັບໃໝຕາມຈຳນວນການຕົກລົງທັງສອງຝ່າຍ /ປະເດັນ/ຄັ້ງ.

2. ການເຂົ້າພື້ນທີ່ ແລະການນຳໃຊ້

2.1 ຜູ້ຮັບເໝົາຈະໄດ້ອະນຸຍາດຕາມແບບຟອມຂໍອະນຸຍາດນຳໃຊ້ພື້ນທີ່ເຮັດວຽກ ກ່ອນທີ່ຈະເຂົ້າພື້ນທີ່ເຮັດວຽກ, ການຫຼຸດຜ່ອນຜົນກະທົບທີ່ສະເໜີດ້ວຍໃບອະນຸຍາດັ່ງກ່າວຈະເປັນໄປຕາມແຜນການຈັດການ ແລະຕິດຕາມກວດກາດ້ານສິ່ງແວດລ້ອມໃນໄລຍະດຳເນີນການ (OPEMMP) ຫຼືແຜນການຈັດການ ແລະຕິດຕາມກວດກາດ້ານສິ່ງແວດ

ລ້ອມໃນໄລະຍະກໍ່ສ້າງ (CPEMMP)ໃນກໍລະນີກິດຈະກໍາຮີ້ຖອນຫນ້າງານໃຫ້ໜ້ອຍທີ່ສຸດ. ຜູ້ຮັບເໝົາຈະຕ້ອງປະຕິບັດຕາມມາດຕະການຫຼຸດຜ່ອນຜົນກະທົບທີ່ສະເໜີໃນແບບຟອມຂໍອະນຸຍາດນໍາໃຊ້ພື້ນທີ່ເຮັດວຽກ ໃນກໍລະນີທີ່ເກີດຄວາມສ່ຽງໃດໜຶ່ງ ຫຼືຜົນກະທົບທາງສິ່ງແວດລ້ອມຜູ້ຮັບເໝົາ ຕ້ອງຍິນຍອມຫຼຸດຜ່ອນ ແກ້ໄຂ ໃຫ້ຢູ່ໃນສະພາບທີ່ຍອມຮັບໄດ້ຕາມທີ່ຜູ້ວ່າຈ້າງສະເໜີ.

2.2 ຜູ້ວ່າຈ້າງມີສິດຂໍໃຫ້ຜູ້ຮັບເໝົາ ແກ້ໄຂໃບແບບຟອມຂໍອະນຸຍາດນໍາໃຊ້ພື້ນທີ່ເຮັດວຽກ ຈົນກວ່າຈະມີການຕົກລົງກ່ຽວກັບມາດຕະການຫຼຸດຜ່ອນຄວາມສ່ຽງດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມ

2.3 ໃນກໍລະນີກິດຈະກໍາທີ່ມີຄວາມສ່ຽງສູງ ຕ້ອງຂໍໃບອະນຸຍາດກ່ອນເລີ່ມເຮັດວຽກ, ຜູ້ຮັບເໝົາຕ້ອງສົ່ງໃບອະນຸຍາດການເຮັດວຽກໃຫ້ ພະນັກງານ SHE ຂອງຜູ້ວ່າຈ້າງເພື່ອກວດສອບ ແລະອະນຸມັດ.

2.4 ຜູ້ຮັບເໝົາຈະຕ້ອງກໍານົດຂອບເຂດພື້ນທີ່ກໍ່ສ້າງ ແລະພື້ນທີ່ໃຊ້ ຫຼືເຮັດວຽກພາຍໃນຂອບເຂດພື້ນທີ່ດັ່ງກ່າວ.

3. ຂັ້ນຕອນການປະຕິບັດງານທີ່ສໍາຄັນດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມ

3.1 ຜູ້ຮັບເໝົາຈະຕ້ອງປະຕິບັດຕາມ ກົດໝາຍ, ກົດລະບຽບ, ຂໍ້ກໍານົດ ຫຼືຂໍ້ບັງຄັບ ແລະຄໍາແນະນໍາຢ່າງເປັນທາງການເພື່ອຄວາມປອດໄພ, ສຸຂະພາບອະນາໄມ ແລະ ສິ່ງແວດລ້ອມເປັນຢ່າງດີ ເຊັ່ນດຽວກັນກັບ ຂັ້ນຕອນການປະຕິບັດງານ ທີ່ບໍລິສັດກໍານົດ ເພື່ອເຮັດວຽກຢ່າງປອດໄພໃນພື້ນທີ່ເຮັດວຽກ.

3.2 ຜູ້ຮັບເໝົາ ແລະຜູ້ຮັບເໝົາຍ່ອຍຕ້ອງຮັບປະກັນວ່າບ່ອນເຮັດວຽກມີຄວາມຮັບຜິດຊອບດ້ານສຸຂະພາບອະນາໄມທີ່ດີ ແລະສະພາບແວດລ້ອມທີ່ປອດໄພ ນອກຈາກນີ້ຕ້ອງມີການປ້ອງກັນດ້ານຄວາມປອດໄພປະຊາຊົນພາຍໃນວຽກງານ ແລະພື້ນທີ່ເຮັດວຽກ.

3.3 ບໍ່ອະນຸຍາດໃຫ້ເດັກນ້ອຍຜູ້ທີມີອາຍຸຕໍ່າກວ່າ 18 ປີ ເຂົ້າເປັນລູກຈ້າງ ເດັກດັ່ງກ່າວຈະຕ້ອງບໍ່ຖືກຈ້າງໃນສ່ວນງານທີ່ເປັນວຽກງານໜັກ ຫຼືຈະເປັນອັນຕະລາຍຕໍ່ສຸຂະພາບຂອງພວກເຂົາ( ອ້າງອີງຈາກ ກົດໝາຍແຮງງານລາວ).

3.4 ຜູ້ຮັບເໝົາ ຕ້ອງດໍາເນີນການບໍາລຸງຮັກສາເຊີງປ້ອງກັນ ແລະຕິດຕາມການກວດສອບຢ່າງສະໝໍ່າສະເໝີສໍາຫຼັບລົດພາຫະນະທຸກປະເພດ ແລະປະຕິບັດຕາມການຄວບຄຸມຂີດຈໍາກັດຄວາມໄວ.

3.4.1 ຄວາມໄວບໍ່ເກີນ 30 ກິໂລແມັດຕໍ່ຊົ່ວໂມງ ສໍາຫຼັບພື້ນທີ່ກໍ່ສ້າງ ແລະດໍາເນີນງານ

3.4.2 ຄວາມໄວບໍ່ເກີນ 30 ກິໂລແມັດຕໍ່ຊົ່ວໂມງ ສໍາຫຼັບພື້ນທີ່ຊຸມຊົນ

3.4.3 ຄວາມໄວບໍ່ເກີນ 60 ກິໂລແມັດຕໍ່ຊົ່ວໂມງ ສໍາຫຼັບພື້ນທີ່ຖະໜົນ/ເສັ້ນທາງສາທາລະນະ

3.5 ຜູ້ຮັບເໝົາ ຕ້ອງຈັດຫາເຈົ້າຫນ້າທີ່ຄວາມປອດໄພຢ່າງພຽງພໍ, ຕົວແທນຜູ້ຮັບຜິດຊອບດ້ານຄວາມປອດໄພ ຫຼືຫົວໜ້າງານດ້ານຄວາມປອດໄພ ຫຼືຜູ້ເໝາະສົມໃນພື້ນທີ່ ຫຼືພື້ນທີ່ປະຕິບັດງານຕະຫຼອດການປະຕິບັດງານເພື່ອຮັກສາຄວາມປອດໄພຈາກອຸປະຕິເຫດ

3.6 ຜູ້ຮັບເໝົາຈະຕ້ອງບໍ່ອະນຸຍາດໃຫ້ຜູ້ທີ່ບໍ່ກ່ຽວຂ້ອງຜ່ານເຂົ້າມາເຮັດວຽກ ຫຼືພື້ນທີ່ເຮັດວຽກ.

3.7 ຕິດຕັ້ງ ແລະປະຕິບັດງານດ້ານລະບົບປ້ອງກັນໄຟໃຫ້ເໝາະສົມ, ການຕິດຕາມວດກາ ແລະເຝົ້າປ້ອງກັນ ພື້ນທີ່ກໍ່ສ້າງ , ທີ່ພັກ, ຫ້ອງການ, ສາງເກັບເຄື່ອງ ແລະອື່ນໆ. ນອກຈາກນີ້ ຕ້ອງກວດກາ ບໍາລຸງຮັກສາເປັນປະຈໍາທຸກເດືອນ, ເມື່ອຜູ້ຮັບເໝົາມີການກໍ່ສ້າງ ອາຄານເກັບເຄື່ອງ, ທີ່ພັກຊົ່ວຄາວ ຫຼືທີ່ພັກສໍາຫຼັບພະນັກງານ ໃນຂອບເຂດພື້ນທີ່, ຜູ້ຮັບເໝົາຈະຕ້ອງຕິດຕັ້ງຊຸດລະບົບດັບເພີງໃຫ້ເໝາະສົມ( 2 ຫົວ ປະເພດ 2A 20B) ຫຼືກຽມນໍ້າໄວ້ໃຫ້ພຽງພໍ( ໜ້ອຍທີ່ສຸດແມ່ນ 2 ຖັງ ໃນປະລິມາດ 200 ລິດໄວ້ແຕ່ລະອາຄານ, ສາງເກັບເຄື່ອງ, ພື້ນທີ່ເຮັດວຽກ) ເພື່ອໄວ້ຕອບສະໜອງກັບເຫດສຸກເສີນ.

3.8 <u>ການລາຍງານອຸປະຕິເຫດ ແລະການສອບສວນ</u>: ຜູ້ຮັບເໝົາ ຈະຕ້ອງແຈ້ງຜູ້ວ່າຈ້າງທັນທີກ່ຽວກັບການບາດເຈັບ ຫຼືອຸປະຕິເຫດທີ່ເກີດຂຶ້ນກັບພະນັກງານ, ການລາຍງານເນຍມິສ( NEAR MISS), ສະຖານະການສຸກເສີນ, ສຽງເຕືອນ, ການຮົ່ວໄຫຼສານເຄມີສູ່ສິ່ງແວດລ້ອມແລະການເສຍຫາຍທາງດ້ານຊັບສິນ ພາຍໃນ 24 ຊົ່ວໂມງນັບຈາກເກີດ

ເຫດ. ຜົນສະຫຼຸບລາຍງານອຸປະຕິເຫດ ແລະການສອບສວນ ຈະຕ້ອງສົ່ງພາຍໃນ 72 ຊົ່ວໂມງຫຼັງຈາກສຳເລັດຂັ້ນຕອນການສອບສວນ. ຜູ້ຮັບເໝົາຈະຕ້ອງເຫັນດີໃນການປັບປຸງແກ້ໄຂເພື່ອປ້ອງກັນການເກີດເຫດຂື້ນຊ້ຳ, ຜູ້ຮັບເໝົາຈະຕ້ອງຮັບຜິດຊອບໃນການ ຮັກສາ ແລະປິ່ນປົວອາການບາດເຈັບ ລວມເຖິງການຊົດເຊີຍຕາມຄວາມເໝາະສົມຕໍ່ຊັບສິນຕາມທີ່ຜູ້ວ່າຈ້າງຮ້ອງຂໍຢ່າງສົມເຫດສົມຜົນ.

3.9 ຜູ້ຮັບເໝົາຈະຕ້ອງແຈ້ງ ແລະລາຍງານເຫດການ ແລະອຸປະຕິເຫດ, ລາຍລະອຽດຂອງເຫດການພາຍໃນ 24 ຊົ່ວໂມງ, ແລ້ວສືບສວນ, ການແກ້ໄຂ, ການສະຫຼຸບ ແລະສົ່ງລາຍງານເຫດການພາຍໃນ 3 ວັນ. ຜູ້ຮັບເໝົາຈະຕ້ອງຍິນຍອມປັບປຸງແກ້ໄຂເພື່ອປ້ອງກັນການເກີດຊ້ຳ.

3.10 ເຄື່ອງມື, ເຄື່ອງຈັກ ແລະ ອຸປະກອນ ໃຫ້ເໝາະສົມ ແລະ ຢູ່ໃນສະພາບດີ ແລະໄດ້ຮັບການກວດສອບ ໂດຍບໍລິສັດກ່ອນທີ່ຈະນຳໄປໃຊ້ງານ. ໃຫ້ຈັດກຽມເຈົ້າໜ້າທີ່ເພື່ອດູແລຮັກສາພື້ນທີ່, ອຸປະກອນ ແລະວັດສະດຸຕົນເອງ. ວັດຖຸມີຄ່າຂອງຜູ້ຮັບເໝົາເສຍຫາຍ ຫຼືສູນເສຍ ຜູ້ວ່າຈ້າງຈະບໍ່ມີການທົດແທນຫຼືຮັບຜິດຊອບ ກ່ຽວກັບກໍລະນີດັ່ງກ່າວ.

3.11 ຈັດຫາຊຸດປະຖົມພະຍາບານສຳຫຼັບ ພະນັກງານ.

3.12 ຜູ້ຮັບເໝົາຕ້ອງຫ້າມພະນັກງານຂອງຕົນ ຕັດ ຫຼືເຄື່ອນຍ້າຍຕົ້ນໄມ້, ສວນ ຫຼືປ່າເບ້ຍໄມ້ ນອກຈາກໄດ້ຮັບອະນຸຍາດ ແລະຫ້າມລົບກວນພື້ນທີ່ນອກຂອບເຂດ ນອກຈາກໄດ້ຮັບອະນຸມັດ.

3.13 ບໍ່ອະນຸຍາດໃຫ້ລ່າສັດປ່າ ຫຼືຈັບສັດປ່າຄຸ້ມຄອງ ຫຼືນຳມາປຸງອາຫານ, ບໍລິໂພກ ໃນພື້ນທີ່ກໍ່ສ້າງ ຫຼືທີ່ພັກຄົນງານ.

3.14 ຮັກສາຄວາມສະອາດພື້ນທີ່ ແລະສຸຂະພາບອະນາໄມ. ຖ້າມີຫ້ອງຄົວ ໃນພື້ນທີ່ກໍ່ສ້າງຕ້ອງຕິດຕັ້ງບໍ່ດັກໄຂມັນ ແລະບໍ່ຕົກຕະກອນ ຫຼືລະບົບບຳບັດອື່ນໆທີ່ເໝາະສົມກ່ອນປ່ອຍສູ່ທຳມະຊາດ.

3.15 ຫ້າມຫຼິ້ນການພະນັນ ແລະດື່ມຂອງມຶນເມົາໃນພື້ນທີ່ກໍ່ສ້າງ ແລະພື້ນທີ່ປະຕິບັດງານ.

3.16 ຈັດຫາຖັງຂີ້ເຫຍື້ອພ້ອມຝາປິດ, ເສດອາຫານຈະຕ້ອງນຳໄປຖິ້ມຢ່າງໜ້ອຍ 1 ຄັ້ງຕໍ່ອາທິດ. ບໍ່ອະນຸຍາດໃຫ້ເຜົາຂີ້ເຫຍື້ອທຸກປະເພດໃນພື້ນທີ່ເຮັດວຽກ ແລະບໍລິເວນທີ່ພັກ. ສົ່ງປະລິມານຂີ້ເຫຍື້ອທົ່ວໄປໃຫ້ HPC ໃນທຸກໆເດືອນ.

3.17 ສະຖານທີ່ຕັ້ງຖັງເກັບນ້ຳມັນເຊື້ອໄຟຕ້ອງຕັ້ງໃນພື້ນທີ່ທີ່ບໍ່ມີການຊຶມຜ່ານໄດ້ ແລະສ້າງຄັນຄູກັ້ນທີ່ບໍ່ມີການຊຶມຜ່ານ ແລະບ່ອນເກັບກັກ. ສາມາດບັນຈຸໄດ້ 110% ຂອງຈຳນວນທັງໝົດຂອງນ້ຳມັນ ຖ້າເປັນພື້ນທີ່ເກັບຊົ່ວຄາວໃນພື້ນທີ່ກໍ່ສ້າງ, ພື້ນທີ່ບ້ານພັກ ຫຼືໂຮງສ້ອມ.

3.18 ຈັດການຂີ້ເຫຍື້ອອັນຕະລາຍໃຫ້ເໝາະສົມ, ຜູ້ຮັບເໝົາຕ້ອງເຄື່ອນຍ້າຍ ວັດສະດຸເກົ່າ, ເສດເຫຼັກ ຈາກພື້ນທີ່ກໍ່ສ້າງ. ນຳຖັງເຄມີ ຫຼືວັດສະດຸອັນຕະລາຍ ເຂົ້າໄວ້ໃນອາຄານເກັບ ຫຼືພື້ນທີ່ເກັບພາຊະນະດັ່ງກ່າວ ຫຼີກລ່ຽງການຮົ່ວໄຫຼລົງພື້ນ ຫຼືໄຫຼສູ່ທຳມະຊາດ. ສົ່ງປະລິມານຂີ້ເຫຍື້ອອັນຕະລາຍ ແລະບໍ່ອັນຕະລາຍ ໃຫ້ HPC ເປັນປະຈຳທຸກໆເດືອນ.

3.19 <u>ການສ້າງທີ່ພັກອາໄສ</u>

- ການສ້າງທີ່ພັກອາໄສຕ້ອງເປັນພື້ນທີ່ ຫ່າງໄກຈາກທາງນ້ຳທຳມະຊາດ ຢ່າງນ້ອຍ 50 ແມັດຈາກເຂດຝັ່ງຂອງນ້ຳ.
- ໃນກໍລະນີພື້ນທີ່ທີ່ພັກເປັນພື້ນທີ່ໃກ້ກັບແມ່ນ້ຳ ຈະຕ້ອງຕິດຕັ້ງບໍ່ຕົກຕະກອນ ຫຼືບໍ່ບຳບັດ ເພື່ອຮັບນ້ຳທີ່ໄຫຼມາຈາກພື້ນທີ່ກໍ່ສ້າງ ແລະພື້ນທີ່ບ້ານພັກ ກ່ອນຈະປ່ອຍສູ່ທຳມະຊາດ.
- ບໍ່ອະນຸຍາດໃຫ້ປ້ຳນ້ຳໃຕ້ດິນອອກ ເພື່ອການກໍ່ສ້າງ.
- ລາຍການກວດຕິດຕາມ ໄດ້ຖືກຕັ້ງຂຶ້ນເພື່ອການກວດສອບ ແລະເຮັດໃຫ້ໝັ້ນໃຈວ່າ ນ້ຳທີ່ປ່ອຍອອກສູ່ທຳມະຊາດມີຄຸນນະພາບ ຕາມຂໍ້ກຳນົດຂອງກົດໝາຍລາວ ແລະມາດຕະຖານທີ່ກ່ຽວຂ້ອງ. ຖ້າຫາກບໍ່ມີການປ່ອຍນ້ຳໃນລາຍການນີ້ຈະບໍ່ຖືກນຳໃຊ້.
- ການສ້າງທີ່ພັກ, ຫ້ອງການ ຫຼືພື້ນທີ່ກໍ່ສ້າງ ຈະຕິດຕັ້ງສຸຂາພິບານດ້ວຍອຸປະກອນທີ່ເໝາະສົມພຽງພໍ ເພື່ອປ້ອງກັນຜົນການຮົ່ວໄຫຼສູ່ດິນ ຫຼືແມ່ນ້ຳໃນພື້ນທີ່ໃກ້ຄຽງ.

- ນ້ຳເປື້ອນຈາກການລ້າງ, ອາບນ້ຳ, ຊັກລີດ ຫຼືອື່ນໆ ຈະຕ້ອງທຳການບຳບັດດ້ວຍລະບົບບໍ່ບຳບັດກ່ອນປ່ອຍສູ່ທຳມະຊາດ. ລາຍການຕິດຕາມຄຸນນະພາບນ້ຳ ຕ້ອງເຂົ້າມາກວດກາ ເມື່ອມີການປ່ອຍສູ່ສິ່ງແວດລ້ອມເພື່ອໝັ້ນໃຈວ່າຄຸນນະພາບນ້ຳທີ່ປ່ອຍອອກນັ້ນຢູ່ໃນຂໍ້ກຳນົດຂອງກົດໝາຍລາວ ແລະມາດຕະຖານທີ່ກ່ຽວຂ້ອງ. ຖ້າຫາກບໍ່ມີການປ່ອຍນ້ຳລາຍການນີ້ຈະບໍ່ຖືກນຳໃຊ້.
- ນ້ຳມັນ, ສານເຄມີ, ວັດສະດຸອື່ນໆ ແລະສານອັນຕະລາຍ ຈະຖືກເກັບໃນບ່ອນປອດໄພ. ມີການປົກຄຸມ ແລະສ້າງຄັນຄູກັ້ນເພື່ອເກັບກັກການຮົ່ວໄຫຼຂອງສານດັ່ງກ່າວ ໂດຍພື້ນທີ່ດັ່ງກ່າວເປັນພື້ນທີ່ບໍ່ມີນ້ຳຖ້ວມ.
- ລາຍການບຳລຸງຮັກສາ ຈະໄດ້ພັດທະນາເພື່ອອຳນວນຄວາມສະດວກສຸຂາພິບານ ຈາກພື້ນທີ່ພັກ ແລະກິດຈະກຳໃນໄລຍະກໍ່ສ້າງອື່ນໆ.
- ຈັດກຽມຫ້ອງນ້ຳໃຫ້ພຽງພໍ ພ້ອມຖັງບຳບັດ ສຳຫຼັບຄົນງານ(1 ຫ້ອງຕໍ່ 20ຄົນ).

3.20 <u>ການຮື້ຖອນທີ່ພັກ</u>

- ການດຳເນີນງານຮື້ຖອນພື້ນທີ່ທັງໝົດ ແລະການຟື້ນຟູ ປະຕິບັດຕາມຂັ້ນຕອນຂອງ ການຮື້ຖອນພື້ນທີ່, ການອະນາໄມ ແລະຟື້ນຟູພື້ນທີ່.
- ຜູ້ຮັບເໝົາຕ້ອງສົ່ງຕາຕະລາງ ແລະແຜນການຮື້ຖອນພາຍໃນ 2 ອາທິດ( 14 ວັນ) ສຳຫຼັບການກວດສອບ ແລະການເລີ່ມແຜນການຮື້ຖອນ ແລະເອກະສານທີ່ກ່ຽວຂ້ອງ.
- ຜູ້ຮັບເໝົາຕ້ອງຍິນຍອມຮັບ ເພື່ອແກ້ໄຂຫຼືຟື້ນຟູໃຫ້ຢູ່ໃນສະພາບດີ ຫາກ HPC ພິຈາລະນາສະຖານະຂອງພື້ນທີ່ກໍ່ສ້າງ ແມ່ນບໍ່ປອດໄພ, ອັນຕະລາຍ, ບໍ່ສະອາດ ຫຼືບໍ່ໝັ້ນຄົງ.
- ເຮັດໃຫ້ໝັ້ນໃຈວ່າພະນັກງານທຸກຄົນ ລວມທັງຜູ້ຮັບເໝົາຍ່ອຍທີ່ຈ້າງ ໄດ້ປະຕິບັດຕາມຂັ້ນຕອນການປະຕິບັດດ້ານນີ້ ເມື່ອມີການຮື້ຖອນ, ອານາໄມ ຫຼືປັບປຸງຟື້ນຟູ ແຕ່ລະຄັ້ງ.

3.21 ສົ່ງເຈົ້າໜ້າທີ່ຮັບຜິດຊອບດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມເຂົ້າຮ່ວມງານກວດສອບກັບ ໜ່ວຍງານ HPC SHE ໜຶ່ງຄັ້ງຕໍ່ອາທິດ. ຜູ້ຮັບເໝົາຕ້ອງຍິນຍອມເພື່ອປັບປຸງ,ແກ້ໄຂເງື່ອນໄຂປະເດັນທີ່ບໍ່ເຮັດຕາມຂໍ້ກຳນົດ ດ້ານຄວາມປອດໄພ, ສຸຂະພາບອະນາໄມ ແລະສິ່ງແວດລ້ອມພາຍໃນວັນທີ່ຕົກລົງກຳນົດເອົາ.

3.22 ເວລາໃດກໍ່ຕາມທີ່ຕົວແທນຂອງນາຍຈ້າງ ຫຼື HPC ກວດກາ ແລະພົບວ່າບໍ່ມີການປັບປຸງ ຫຼືແກ້ໄຂຂອງປະເດັນການບໍ່ປະຕິບັດຕາມຂໍ້ກຳນົດ ພາຍໃນວັນທີ່ກຳນົດຈາກ ໜັງສືລາຍງານການກວດສອບ ຫຼືໜັງສືລາຍງານການບໍ່ປະຕິບັດຕາມຂໍ້ກຳນົດ ເຊັ່ນ ສະພາບມີຄວາມສ່ຽງທີ່ເປັນອັນຕະລາຍ ຫຼືປະເດັນການກໍ່ສ້າງໂດຍ ໜ່ວຍງານກວດສອບດ້ານສິ່ງແວດລ້ອມEMU, ນາຍຈ້າງຈະພິຈາລະນາປັບໃໝກ່ຽວກັບປະເດັນດັ່ງນີ້:

- ຢຸດການຈ່າຍເງິນຊົ່ວຄາວໃນຄັ້ງຕໍ່ໄປ.
- ຢຸດການເຮັດວຽກ ແຕ່ຍັງນັບເວລາການເຮັດວຽກ.
- ບັນທຶກຜູ້ຮັບເປັນບັນຊີດຳ ສຳຫຼັບສັນຍາ ຫຼືການຈ້າງງານຄັ້ງຕໍ່ໄປ.
- ການພິຈາລະນາອື່ນໆທີ່ເໝາະສົມໂດຍຜູ້ວ່າຈ້າງ.

3.23 ຜູ້ຮັບເໝົາຕ້ອງຍິນຍອມແກ້ໄຂ ຫຼືປັບປຸງໃຫ້ຢູ່ໃນສະພາບດີ ຖ້າ HPC ພິຈາລະນາສະພາບຂອງພື້ນທີ່ກໍ່ສ້າງໃນສະພາບບໍ່ປອດໄພ, ອັນຕະລາຍ, ເປິເປື້ອນ ຫຼືບໍ່ໝັ້ນຄົງ.

3.24 ຄົນງານທີ່ຈ້າງໂດຍຜູ້ຮັບເໝົາຕ້ອງຜ່ານການກວດສຸຂະພາບເພື່ອໃຫ້ໝັ້ນໃຈວ່າພວກເຂົາເຫຼົ່ານັ້ນບໍ່ໄດ້ຮັບພະຍາດຈາກການເຮັດ ຫຼືພະຍາດຕິດຕໍ່ກ່ອນການເຮັດວຽກ. ເມື່ອຜູ້ສະໝັກມີພະຍາດ ຫຼືພະຍາດຕິດຕໍ່ ຜູ້ຈ້າງອາດຈະຍົກເລີກການສະໝັກງານການຈ້າງງານ.

3.25 ໃນກໍລະນີທີ່ນາຍຈ້າງໄດ້ຖືກປັບໃໝຈາກປະເດັນໂດຍ EMU ຫຼືGOL ຫຼືຜູ້ຮຽກຮ້ອງ ເນື່ອງຈາກຜົນກະທົບທີ່ເກີດຂຶ້ນຈາກການບໍ່ປະຕິບັດຕາມຂໍ້ກຳນົດ ຂອງການຈັດການ ແລະດຳເນີນງານ ດ້ານSHE ຊຶ່ງສາເຫດຈາກ

ກິດຈະກຳ ຫຼືວຽກຂອງຜູ້ຮັບເໝົາ, ຜູ້ຮັບເໝົາຈະຕ້ອງຈ່າຍຄ່າປັບໃໝ ຫຼືຄ່າເສຍຫາຍຈຳນວນທັງໝົດໃຫ້ກັບຜູ້ວ່າຈ້າງ ທີ່ກຳນົດໂດຍ EMU  ຫຼືGOL ຫຼືຜູ້ຮຽກຮ້ອງ.

3.26 ຜູ້ຮັບເໝົາຕ້ອງຈັດຫາອຸປະກອນປ້ອງກັນສ່ວນບຸກຄົນ (PPE) ທີ່ຈຳເປັນແລະເໝາະສົມໃຫ້ກັບຄົນງານ ລວມໄປເຖິງໝວກນິລະໄພ, ເກີບນິລະໄພ ແລະ ເສື້ອສະທ້ອນແສງ ເມື່ອເຮັດວຽກໃນຍາມກາງຄືນ ແລະອຸປະກອນປ້ອງກັນອື່ນໆ ເມື່ອເຮັດວຽກທີ່ເປັນອັນຕະລາຍ.

ເມື່ອນາຍຈ້າງແຈ້ງປະກາດ ຫຼືແຈ້ງການໃຫ້ແກ້ໄຂ ຫຼືດຳເນີນການແກ້ໄຂໂດຍທາງ ອີເມວ ຫຼືແຈ້ງການຢ່າງເປັນທາງການ ພາຍໃນວັນທີ່ກຳນົດ ແຕ່ຜູ້ຮັບເໝົາ/ຜູ້ປະກອບການ ບໍ່ແກ້ໄຂ ຫຼືບໍ່ທຳການແກ້ໄຂພາຍໃນວັນທີ່ກຳນົດ ຜູ້ຮັບເໝົາ/ຜູ້ປະກອບການຕົກລົງທີ່ຈະຫັກເງິນ ອັດຕາຄ່າປັບຕາມລາຍລະອຽດດັ່ງຕໍ່ໄປນີ້:

3.26.1 ເມື່ອຜູ້ຮັບເໝົາ/ຜູ້ປະກອບການ ສົ່ງລາຍງານປະຈຳເດືອນຊ້າກ່ວາກຳນົດ ອັດຕາຄ່າປັບ = 500,000 ກີບ 2,000 ບາດຕໍ່ສະບັບ.

3.26.2 ເມື່ອ ພະນັກງານບໍລິສັດ  ຜູ້ຮັບເໝົາ/ຜູ້ປະກອບການ ຫຼືພະນັກງານບໍ່ມີ ຫຼືບໍ່ສວມໃສ່ອຸປະກອນປ້ອງກັນພື້ນຖານສ່ວນບຸກຄົນ( ໝວກນິລະໄພ, ເກີບນິລະໄພ ແລະ ເສື້ອສະທ້ອນແສງ ຫຼືແຂບສະທ້ອນແສງໃນຊຸດເຮັດວຽກ) ແລະ PPE  ທີ່ສະເພາະເຈາະຈົງຂຶ້ນຢູ່ກັບປະເພດອັນຕະລາຍຈາກການເຮັດວຽກ ອັດຕາຄ່າປັບແມ່ນ:

- ເກີບນິລະໄພ: 115,000 ກີບ ຫຼື 460 ບາດ/ຄັ້ງ/ຄົນ
- ໝວກນິລະໄພ: 115,000 ກີບ ຫຼື 460 ບາດ/ຄັ້ງ/ຄົນ
- ເສື້ອສະທ້ອນແສງ ຫຼືແຂບສະທ້ອນແສງໃນຊຸດເຮັດວຽກ: 115,000 ກີບ ຫຼື 460 ບາດ/ຄັ້ງ/ຄົນ
- ຖົງມື: 115,000 ກີບ ຫຼື 460 ບາດ/ຄັ້ງ/ຄົນ
- ໜ້າກາກ(ຜ້າປິດດັງ): 115,000 ກີບ ຫຼື 460 ບາດ/ຄັ້ງ/ຄົນ
- PPE ອື່ນໆ ເຊັ່ນ ສາຍຮັດແອວນິລະໄພ : 100,000 ກີບ ຫຼື 400 ບາດ/ຄັ້ງ/ຄົນ